# ສະຫະພັນແມ່ຍິງ ທຫລ ທວນຄືນມູນເຊື້ອວັນແມ່ຍິງສາກົນ ຄົບຮອບ 107 ປີ




ສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ( ທຫລ ) ໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນ ຄົບຮອບ 107 ປີ ( 8 ມີນາ 1910 – 8 ມີນາ 2017 ) ຂຶ້ນໃນວັນທີ 25 ມີນາ 2017 ແລະ ໄດ້ດຳເນີນໄປເປັນເວລາເຄິ່ງວັນ ທີ່ສະໂມສອນຂອງສະຖາບັນການທະນາຄານ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ປອ ສົມພາວ ໄຟສິດ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ມີສະຫາຍ ນາງ ບັນດິດ ປະທຸມວັນ ຮອງປະທານ ສູນກາງສະຫະພັນແມ່ຍິງລາວ. ພ້ອມນີ້, ກໍ່ມີບັນດາສະຫາຍຄະນະພັກ, ຄະນະສະຫະພັນແມ່ຍິງ ທຫລ, ຄະນະສະຫະພັນແມ່ຍິງຮາກຖານ ຕະຫຼອດຮອດສະມາຊິກແມ່ຍິງທົ່ວລະບົບທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງຫຼວງຫຼາຍ.





ການຈັດປະຖະກະຖາໃນຄັ້ງນີ້ ກໍ່ເພື່ອເຮັດເອື້ອຍນ້ອງແມ່ຍິງກໍຄືສະມາຊິກແມ່ຍິງໃນລະບົບທະນາຄານຮັບຮູ້-ເຂົ້າໃຈ ແລະ ສາມາດກຳແໜ້ນມູນເຊື້ອ-ປະຫວັດຄວາມເປັນມາ ແລະ ເຫັນໄດ້ເຖິງຄວາມໝາຍ-ຄວາມສຳຄັນຂອງວັນແມ່ຍິງສາກົນ. ໃນໂອກາດດັ່ງກ່າວ, ສະຫາຍ ນາງ ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງ ທຫລ ໄດ້ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານຂອງສະຫະພັນແມ່ຍິງ ທຫລ ປະຈຳປີ 2016 ແລະ ທິດທາງແຜນການປະຈຳປີ 2017 ໂດຍທ່ານໄດ້ຍົກໃຫ້ເຫັນຜົນງານທີ່ພົ້ນເດັ່ນໃນຫຼາຍດ້ານຂອງສະຫະພັນແມ່ຍິງ ທຫລ ທີ່ສາມາດຍາດມາໄດ້ໃນຕະຫຼອດໄລຍະ 1 ປີຜ່ານມາ ເຊິ່ງສະແດງອອກ ສະມາຊິກແມ່ຍິງ ທຫລ ໄດ້ຮັບການຍ້ອງຍໍຈາກທ່ານຜູ້ວ່າການ ທຫລ ປະຈຳປີ 2015 ຈຳນວນ 199 ຄົນ, ໃບຊົມເຊີຍຈາກທ່ານຜູ້ວ່າການ ທຫລ ຈຳນວນ 343 ຄົນ ແລະ ສະມາຊິກແມ່ຍິງທີ່ເປັນຄູສອນຢູ່ສະຖາບັນການທະນາຄານ ຈຳນວນ 19 ຄົນ ໄດ້ຮັບການຍ້ອງຍໍ ເນື່ອງໃນໂອກາດສະເຫຼີມສະຫຼອງວັນຄູແຫ່ງຊາດ ຄົບຮອບ 21 ປີ ແລະ ຍັງສາມາດຍາດໄດ້ທຸງໄຊ, ໃບຍ້ອງຍໍ ແລະ ຊົມເຊີຍ 3 ດີ ໄລຍະ 2 ແຕ່ 2012-2015 ຂັ້ນສູນກາງສະຫະພັນແມ່ຍິງລາວ. ນອກຈາກນີ້, ທ່ານຍັງໄດ້ຍົກໃຫ້ເຫັນເຖິງຂໍ້ຄົງຄ້າງບາງດ້ານ ແລະ ບົດຮຽນທີ່ຖອດຖອນໄດ້ເພື່ອນຳໄປປັບປຸງ-ແກ້ໄຂໃນວຽກງານສະເພາະໜ້າໃຫ້ດີຂຶ້ນເລື້ອຍໆ.





ຈາກນັ້ນ, ສະຫາຍ ນາງ ບັນດິດ ປະທຸມວັນ ຮອງປະທານສູນກາງສະຫະພັນແມ່ຍິງລາວ ໄດ້ໃຫ້ກຽດເລົ່າຄືນມູນເຊື້ອຂອງແມ່ຍິງ ເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງຕົ້ນກຳເນີດ, ບົດບາດ ແລະ ຄວາມໝາຍ-ຄວາມສຳຄັນຂອງວັນດັ່ງກ່າວ ແລະ ມັນເປັນປະໂຫຍດໃຫ້ແກ່ຜູ້ເຂົ້າຮ່ວມ ໄດ້ຖອດຖອນບົດຮຽນນຳໄປນຳໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງຕົນເອງໃຫ້ມີການພັດທະນາຂຶ້ນໃນຕໍ່ໜ້າ.

ໃນຕອນທ້າຍຂອງພິທີ, ສະຫາຍເລຂາຄະນະພັກທະນາຄານແຫ່ງ ສປປ ລາວ ໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍ ທີ່ສະຫະພັນແມ່ຍິງ ທຫລ ທີ່ສາມາດປະຕິບັດໜ້າທີ່ວຽກງານຈົນໄດ້ຮັບຜົນສຳເລັດໃນຫຼາຍດ້ານ ພ້ອມທັງໃຫ້ທິດຊີ້ນຳບາງດ້ານເພື່ອເປັນເຂັມທິດເບື້ອງທາງໃຫ້ແກ່ເອື້ອຍນ້ອງແມ່ຍິງທົ່ວຂະແໜງການທະນາຄານໄດ້ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານໃນຕໍ່ໜ້າໃຫ້ມີຜົນສຳເລັດຍິ່ງໃຫຍ່ກວ່າເກົ່າ.

❖ *ຂ່າວ - ພາບ : ຄຳສອນ ສະວິສຸກ*

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*